https://www.vientianetimeslao.la/%E0%BA%9A%E0%BB%8D%E0%BA%A5%E0%BA%B4%E0%BA%AA%E0%BA%B1%E0%BA%94%E0%BA%9A%E0%BA%BB%E0%BA%A7%E0%BA%A5%E0%BA%B0%E0%BA%9E%E0%BA%B2-%E0%BB%81%E0%BA%A5%E0%BA%B0-%E0%BA%A5%E0%BA%B1%E0%BA%94%E0%BA%96%E0%BA%B0/

vientianetimeslao.la/ບໍລິສັດບົວລະພາ-ແລະ-ລັດຖະ/




Home - ຂ່າວທັງໝົດ - ພາຍໃນປະເທດ - ບໍລິສັດບົວລະພາ ແລະ ລັດຖະບານ ລົງນາມດັດແກ້ ແລະ ເພີ່ມເນື້ອທີ່ສຳປະທານຈຳນວນ 60.000 ເຮັກຕາ

# ບໍລິສັດບົວລະພາ ແລະ ລັດຖະບານ ລົງນາມດັດແກ້ ແລະ ເພີ່ມເນື້ອທີ່ສຳປະທານຈຳນວນ 60.000 ເຮັກຕາ

11 March 2022

3 months ago

0 632 Less than a minute

ບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ຈຳກັດ ແລະ ລັດຖະບານລາວໄດ້ເຊັນສັນຍາ (ລົງນາມ) ເມື່ອວັນທີ 9 ມີນາ 2022 ທີ່ຜ່ານມາຢູ່ກະຊວງແຜນການ ແລະ ການລົງທຶນ ກ່ຽວກັບການດັດແກ້ ແລະ ເພີ່ມເນື້ອທີ່ສຳປະທານຈຳນວນ 60.000 ເຮັກຕາ ຢູ່ແຂວງວຽງຈັນ ແລະ ແຂວງໄຊຍະບູລີ ເຂົ້າໃນສັນຍາສຳປະທານໂຄງການປູກໄມ້ອຸດສາຫະກຳຢູ່ເຂດປ່າຜະລິດແຫ່ງຊາດທີ່ມີສະພາບເຊື່ອມໂຊມ ແລະ ປອກໂຫຼ້ນຢູ່ແຂວງວຽງຈັນ ສະບັບລົງວັນທີ 31 ກໍລະກົດ 2020 ຊຶ່ງຕາງໜ້າລັດຖະບານລາວລົງນາມໂດຍທ່ານ ນາງ ຄຳຈັນ ວົງແສນບູນ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ແລະ ຕາງໜ້າບໍລິສັດ ລົງນາມໂດຍທ່ານ ນາງ ສຸໄພວັນ ທ່ຽງຈັນໄທ ຮອງຜູ້ອຳນວຍການບໍລິສັດບົວລະພາກະສິກຳ-ປ່າໄມ້ ຈຳກັດ ແລະ ພາກສ່ວນທີ່ກ່ຽວຂ້ອງລົງນາມເປັນສັກຂີພິຍານ ໂດຍການເຂົ້າຮ່ວມຂອງທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ.

ທ່ານ ນາງ ສຸໄພວັນ ທ່ຽງຈັນໄຊໄດ້ກ່າວໃນພິທີໂດຍມີເນື້ອໃນບາງຕອນທີ່ສຳຄັນວ່າ: ບໍລິສັດບົວລະພາໄດ້ຮັບອະນຸຍາດຈາກລັດຖະບານໃນການສຳປະທານເນື້ອທີ່ດິນປ່າຜະລິດທີ່ຊຸດໂຊມຈຳນວນ 60.000 ເຮັກຕາ ເພື່ອນຳໃຊ້ເຂົ້າໃນການປູກໄມ້ອຸດສາຫະກຳເພື່ອປ້ອນໂຮງງານປຸງແຕ່ງໄມ້ຄືນບົງຈອນ ຢູ່ເມືອງໄຊທານີ ນະຄອນຫຼວງວຽງຈັນ ແລະ ໂຮງງານຜະລິດໄມ້ອັດຢູ່ເມືອງຫີນເຫີບແຂວງວຽງຈັນ. ບໍລິສັດ ບົວລະພາ ໄດ້ສ້າງຕັ້ງຂຶ້ນຢູ່ ສປປ ລາວ ໂດຍເປັນການລົງທຶນລະຫວ່າງນັກທຸລະກິດລາວ ແລະ ຊູແອັດ, ນັບແຕ່ປີ 2000 ໄດ້ສ້າງຕັ້ງໂຮງງານປຸງແຕ່ງໄມ້ຄືນບົງຈອນຢູ່ບ້ານແສນອຸດົມ ເມືອງໄຊທານີ ນະຄອນຫຼວງວຽງຈັນ ໄດ້ປຸງແຕ່ງຜະລິດຕະພັນສຳເລັດຮູບຫຼາກຫຼາຍລາຍການຕາມການສັ່ງຈອງຂອງລູກຄ້າຈາກ "ໄມ້ວິກ ໄມ້ກະຖິນ ແລະ ໄມ້ສັກ" ຂາຍພາຍໃນ ແລະ ສົ່ງອອກຫຼາຍກວ່າ 20 ປະເທດໃນໂລກ.

ທ່ານ ນາງ ສຸໄພວັນ ໄດ້ກ່າວຕື່ມວ່າ: ໄລຍະທີ 1 ແລະ 2 ບໍລິສັດໄດ້ລົງທຶນປັບປຸງໂຮງງານປຸງແຕ່ງໄມ້ຄືນບົງຈອນ ແລະ ສຸມໃສ່ຂະຫຍາຍພື້ນທີ່ປູກໄມ້ປະມານ 26 ລ້ານໂດລາ ເພື່ອໃຫ້ໄດ້ວັດຖຸດິບພຽງພໍຕາມຄວາມຕ້ອງການ, ສະເພາະໂຮງງານໄມ້ອັດໄດ້ລົງທຶນທັງໝົດພ້ອມທີມຕັດໄມ້ປະມານ 20 ລ້ານໂດລາ ທີ່ສຳເລັດການກໍ່ສ້າງໃນກາງປີ 2021 ແລະ ໄດ້ເລີ່ມທົດລອງຜະລິດ ມາຮອດປັດຈຸບັນໄດ້ພຽງແຕ່ 60% ແລະ ໄດ້ລອງສົ່ງຜະລິດຕະພັນໄມ້ອັດໄປປະເທດອົດສະຕຣາລີ, ອິນເດຍ ແລະ ປະເທດໄທແລ້ວໃນທ້າຍເດືອນມິຖຸນາ 2021 ທີ່ຜ່ານມາ ແລະ ຮອດປັດຈຸບັນບໍລິສັດມີເນື້ອທີ່ປູກໄມ້ແລ້ວປະມານ 5.500 ເຮັກຕາ.

ສ່ວນໄລຍະທີ 3 ຫຼື ໃນອະນາຄົດ ບໍລິສັດຈະສ້າງໂຮງງານອຸດສາຫະກຳລະລາຍເຍື່ອໄມ້ທີ່ທັນສະໄໝ ເພື່ອນຳໄປປຸງແຕ່ງເປັນແຜ່ນແພ, ວັດສະດຸຫຸ້ມຫໍ່ ເຍື່ອເຈັ້ຍ, ເຫຼົ້າ 90 ,ສານເຄມີສຳລັບປະສົມຜະລິດຊີມັງ, ໄຟຟ້າ ແລະ ອື່ນໆ ຈະກ້າວໄປໃຫ້ເຖິງຈຸດນີ້ ໄດ້ນັ້ນຕ້ອງມີເນື້ອທີ່ປູກໄມ້ໃຫ້ໄດ້ 60.000 ເຮັກຕາ ໂດຍຈະໃຊ້ທຶນທັງໝົດປະມານ 1 ຕື້ໂດລາ.



07 November 2019
ລັດມີແຜນເພີ່ມຕົວເລກລັດຖະກອນໃໝ່ອີກ 500 ຄົນ


07 December 2019
ການສ້າງນິຕິກຳຜ່ານມາໄດ້ແຕ່ປະລິ ມານ ສ່ວນຄຸນນະພາບມີໜ້ອຍ


21 December 2019
ພົບພະນັກງານທີ່ມີເຖືອນໄຂຄົບຖ້ວນແຕ່ບໍ່ໄດ້ຮັບນະໂຍບາຍກົງກັນຂ້າມຜູ້ທີ່ບໍ່ມີເງື່ອນ ໄຂຄົບພັດໄດ້ຮັບ

ຂ່າວທີ່ໄດ້ຮັບການຈັດລຳດັບ

RECENT | POPULAR | COMMON


18 June 2022
ເມືອງຫົງສາ ທຳລາຍສິນຄ້າໝົດອາຍຸ


18 June 2022
ແຂວງອັດຕະປື ທຳລາຍຊິ້ນສ່ວນສັດນ້ຳ-ສັດປ່າ ທີ່ລັກລອບມາຂາຍ

18 June 2022
ພະລັງງານໄຟຟ້າໄຫ້ສົງກະເປໄລຍະ ເວລາ 2 ປີ

18 June 2022
ກະຊວງການເງິນ ແຈ້ງໃຫ້ທຸກດ່ານພາສີ ອຳນວຍຄວາມສະດວກໃນການນຳເຂົ້ານ້ຳມັນເຊື້ອໄຟ

